ເພື່ອການຄຸ້ມຄອງທີ່ເຂັ້ມແຂງ
PCAP2 LAO PDR
For Better PIP Management

# ວາລະສານ PCAP2

**PCAP2 NEWSLETTER**
ສະບັບທີ 7 ເດືອນ 8 ປີ 2010

## ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງການລົງທຶນຂອງລັດ

**Project for Enhancing Capacity in Public Investment Program (PIP) Management (PCAP2)**

ເນື້ອໃນຫຼັກ


- ການແນະນຳຕົວ ແລະ ຄຳຄິດເຫັນຂອງຫົວໜ້າ ກົມປະເມີນຜົນຜູ້ໃໝ່
- ການຝຶກອົບຮົມໃຫ້ກັບຄູຝຶກ (TOT) ຄັ້ງສຸດທ້າຍຂອງ PCAP2
- ທົບທວນຄືນກິດຈະກຳ ປີທີ 3 ຂອງ PCAP2
- ພະນັກງານ ກົມປະເມີນຜົນ (ຜູ້ປະສານງານໂຄງການພິແຄັບ)


# ທ່ານ ບຸນປອນ ສີສຸລາດ ຫົວໜ້າກົມປະເມີນຜົນ



ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງທີ່ໄດ້ຮັບການແຕ່ງຕັ້ງໃຫ້ເປັນຫົວໜ້າກົມປະເມີນຜົນ ກະຊວງແຜນການ ແລະການລົງທຶນຜູ້ໃໝ່, ແລະ ໃນເວລາດຽວກັນກໍ່ໄດ້ຮັບການມອບໝາຍໃຫ້ເປັນຜູ້ບໍລິຫານໂຄງການ ພິແຄັບ 2ຜູ້ໃໝ່ໃນເດືອນມິຖຸນາ ປີ 2010 ນີ້ເຊັ່ນກັນ.

ຂ້າພະເຈົ້າຮຽນຈົບຊັ້ນປຣິນຍາໂທ ວິຊາວາງແຜນເສດຖະກິດແຫ່ງຊາດ ຈາກມະຫາວິທະຍາໄລ ເມືອງ ດາແນສ ອະດີດສະຫະພາບໂຊຫວຽດໃນປີ 1984 ແລະ ໄດ້ຖືກຊັບຊ້ອນເຮັດວຽກນຳພັກ ແລະ ລັດຖະບານແຕ່ນັ້ນມາ ທີ່ຄະນະກຳມະການແຜນການແຫ່ງລັດ, ເຊິ່ງແມ່ນກະຊວງແຜນການ ແລະ ການລົງທຶນໃນເວລານີ້. ຊຶ່ງແມ່ນບ່ອນຂ້າພະເຈົ້າໄດ້ເຮັດວຽກງານຢູ່ໃນສະຖານທີ່ດຽວກັນກັບໃນເວລານີ້, ຕ່າງແຕ່ວ່າໃນເວລານັ້ນມີພຽງແຕ່ຕຶກສອງຊັ້ນເຊິ່ງເປັນບ່ອນທີ່ຫ້ອງການພິແຄັບ2ຕັ້ງຢູ່ໃນເວລານີ້. ແຕ່ກ່ອນຢູ່ໃນກະຊວງມີລົດໃຫຍ່ພຽງ 3-4 ຄັນ, ເຊິ່ງແມ່ນປະທານ,ຮອງປະທານ ແລະລົດຮັບໃຊ້ຫ້ອງການເທົ່ານັ້ນເປັນຜູ້ນຳໃຊ້ ມາປະຈຸບັນເຫັນວ່າມີການພັດທະນາຫລາຍ. ໃນເວລານັ້ນຂ້າພະເຈົ້າໄດ້ເຮັດວຽກຢູ່ກົມການຄ້າເປັນເວລາ 2ປີ ກ່ອນທີ່ຂ້າພະເຈົ້າຈະຖືກມອບໝາຍໃຫ້ໄປຮັບໜ້າທີ່ຢູ່ແຂວງ ສະຫວັນນະເຂດໃນປີ 1986. ຢູ່ທີ່ນັ້ນຂ້າພະເຈົ້າໄດ້ເຮັດວຽກຢູ່ພະແນກແຜນການ, ພະແນກແຜນການ-ການເງິນໃນຖານະພະນັກງານວິຊາການ ແລະ ກ້າວມາເປັນຫົວໜ້າຫ້ອງການໃນປີ 1988, ຂ້າພະເຈົ້າໄດ້ຖືກມອບໝາຍ ແລະ ແຕ່ງຕັ້ງໃຫ້ເປັນຮອງຫົວໜ້າພະແນກການຄ້າ ແລະ ພົວພັນເສດຖະກິດກັບຕ່າງປະເທດໃນປີ 1989, ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າພະແນກການຄ້າ ແລະ ການທ່ອງທ່ຽວໃນປີ 1990 (ຊື່ເກົ່າ). ຂ້າພະເຈົ້າໄດ້ກັບຄືນມາກຳແພງນະຄອນວຽງຈັນ ຫລື ນະຄອນຫລວງວຽງຈັນໃນເວລານີ້ໃນປີ 1999 ແລະ ໄດ້ຮັບການແຕ່ງຕັ້ງໃຫ້ເປັນຫົວໜ້າພະແນກການຄ້າ ແລະ ໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າພະແນກອຸດສາຫະກຳ-ການຄ້າໃນປີ 2006–2009 ຫລັງຈາກນັ້ນຂ້າພະເຈົ້າໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າພະແນກແຜນການ ແລະ ການລົງທຶນໃນເດືອນ ພຶດສະພາ ປີ 2009 ກ່ອນທີ່ຈະຖືກແຕ່ງຕັ້ງໃຫ້ມາຮັບໜ້າທີ່ໃຫ້ມາເປັນຫົວໜ້າກົມປະເມີນໃນປີ 2010.

ຂ້າພະເຈົ້າໄດ້ຖືກຄັດເລືອກໃຫ້ລົງສະໝັກຜູ້ແທນໃນປີ 2005 ດ້ວຍຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນ, ຂ້າພະເຈົ້າໄດ້ຮັບການຄັດເລືອກຈາກປະຊາຊົນໃຫ້ເປັນສະມາຊິກສະພາແຫ່ງຊາດຊຸດທີ VI ໃນປີ 2005 ດ້ວຍເຫດນັ້ນ, ປະຈຸບັນຂ້າພະເຈົ້າຈຶ່ງໄດ້ຮັບຜິດຊອບ 2 ໜ້າທີ່ຄື: ໜ້າທີ່ຝ່າຍນິຕິບັນຍັດ ແລະ ອີກໜ້າທີ່ໜຶ່ງແມ່ນ ຝ່າຍບໍລິຫານ.

ຕະຫລອດໄລຍະເວລາຂອງການເຮັດວຽກຢູ່ແຜນການແຫ່ງລັດ ຂ້າພະເຈົ້າໄດ້ມີສ່ວນຮ່ວມໃນການຕິດຕາມກວດການໂຄງການລົງທຶນຂອງລັດຫລາຍໂຄງການເຊັ່ນ: ໂຄງການຊົນລະປະທານຂະໜາດໃຫຍ່ ແລະ ໂຄງການກໍ່ສ້າງທາງເລກທີ່ 13 ໃຕ້ຢູ່ແຂວງ ສະຫວັນນະເຂດ. ໃນເວລານັ້ນພວກເຮົາຍັງບໍ່ທັນມີກົດໝາຍກ່ຽວກັບການລົງທຶນຂອງລັດ ມີແຕ່ປະຕິບັດຕາມບົດແນະນຳ ແລະ ຂໍ້ຕົກລົງຕ່າງໆ, ລະບົບການຕິດຕາມແລະປະເມີນຜົນທີ່ມີໃນເວລານັ້ນກໍ່ບໍ່ທັນສົມບູນ. ແນວໃດກໍ່ຕາມການຄຸ້ມຄອງໂຄງການລົງທຶນຂອງລັດກໍ່ເຫັນວ່າເຮັດໄດ້ດີພໍສົມຄວນ. ຜ່ານການປະຕິບັດໜ້າທີ່ວຽກງານຕົວຈິງໃນການຕິດຕາມກວດກາ ແລະ ປະເມີນຜົນໂຄງການລົງທຶນຂອງລັດໃນຜ່ານມາ ພວກເຮົາໄດ້ປະສົບກັບບັນຫາຄວາມຫຍຸ້ງຍາກຫລາຍປະການຢູ່ໃນວຽກງານການຄຸ້ມຄອງໂຄງການລົງທຶນຂອງລັດ, ເຊິ່ງບາງບັນຫາກໍ່ຍັງບໍ່ທັນໄດ້ຮັບການແກ້ໄຂຈົນມາຮອດທຸກວັນນີ້.ບັນຫາທີ 1: ເຫັນວ່າການຂຽນບົດສະເໜີໂຄງການບໍ່ທັນມີແບບຟອມທີ່ເປັນເອກະພາບແລ້ວແຕ່ຜູ້ຈະເຮັດ, ເຊິ່ງເປັນຜົນເຮັດໃຫ້ຂໍ້ມູນໂຄງການບໍ່ພຽງພໍປະເມີນບໍ່ໄດ້. ບັນຫາທີ2: ແມ່ນການສະເໜີໂຄງການເຂົ້າມາຍັງກະຊວງ

ແຜນການ ແລະ ການລົງທຶນຍັງບໍ່ເປັນລະບົບທີ່ເປັນເອກະພາບຫລາຍໂຄງການສົ່ງບໍ່ທັນເວລາ ບໍ່ໄດ້ຜ່ານການປະເມີນກ່ອນເອົາເຂົ້າແຜນ. ບັຫາທີ 3: ພວກເຮົາຍັງຂາດພະນັກງານທີ່ມີຄວາມສຳນານໃນການປະເມີນຜົນໂຄງການລົງທຶນຂອງລັດ ຊຶ່ງຈະຕ້ອງໄດ້ສືບຕໍ່ສ້າງໃຫ້ເປັນລະບົບ, ແລະ ບັນຫາທີ່ 4: ແມ່ນບັນຫາງົບປະມານການຕິດຕາມກວດກາໂຄງການລົງທຶນຂອງລັດ ທຳມະດາຕ້ອງໄດ້ຕິດຕາມ ແລະ ກວດກາເປັນ 4 ໄລຍະໃຫຍ່ໆຄື: ຕ້ອງກວດກາ ແລະ ປະເມີນກ່ອນເອົາເຂົ້າແຜນຕິດຕາມກວດກາໄລຍະຈັດຕັ້ງປະຕິບັດໂຄງການໄລຍະກ່ອນການມອບຮັບໂຄງການ ແລະ ຕ້ອງໄດ້ຕິດຕາມກວດກາ ແລະ ປະເມີນຜົນຫລັງການນຳໃຊ້ໂຄງການນັ້ນໄປໄດ້ໄລຍະໃດໜຶ່ງ ເພື່ອເຮັດຫລ້ອນໜ້າທີ່ດັ່ງກ່າວມັນຮຽກຮ້ອງໃຫ້ມີງົບປະມານພຽງພໍ.

ໂຄງການຮ່ວມມືທາງດ້ານວິຊາການຂອງໄຈກາ ພີແສັບ1 ແລະ 2 ໄດ້ເຂົ້າພໍດີຖືກກັບເວລາທີ່ວຽກງານດັ່ງກ່າວນີ້ມີຄວາມຮຽກຮ້ອງຕ້ອງການ. ພວກເຮົາສາມາດເຫັນໄດ້ວ່າຫລາຍບັນຫາທີ່ກ່າວມາຂ້າງເທິງນັ້ນໄດ້ຄ່ອຍໆຮັບການປັບປຸງໃຫ້ດີຂຶ້ນ.ເອກະສານຄູ່ມືຂອງພີແສັບໄດ້ຊ່ວຍໃຫ້ການຮ່າງກົດໝາຍການລົງທຶນຂອງລັດສະດວກຂຶ້ນ. ຊຶ່ງເຫັນໄດ້ວ່າຫລາຍໆຂໍ້ຄວາມຂອງກົດໝາຍການລົງທຶນຂອງລັດ ແມ່ນໄດ້ດຶງມາຈາກບາງເນື້ອໃນສຳຄັນຂອງປຶ້ມຄູ່ມືພີແສັບ. ກະຊວງແຜນການ ແລະ ການລົງທຶນຍັງມີຄວາມຈຳເປັນທີ່ຈະກ້າວໄປຂ້າງໜ້າເພື່ອການປັບປຸງໃຫ້ວຽກງານການຄຸ້ມຄອງໂຄງການລົງທຶນຂອງລັດດີຂຶ້ນເລື້ອຍໆ. ປະຈຸບັນ ກະຊວງ ຜທ ກຳລັງສຸມໃສ່ການຮ່າງດຳລັດການຈັດຕັ້ງປະຕິບັດກົດໝາຍ. ກະຊວງ ຜທ ຮ່ວມກັບພີແສັບ ຍັງຈະໄດ້ແກ້ໄຂບັນຫາອື່ນໆອີກເຊັ່ນ: ການຜັນຂະຫຍາຍຜົນໄດ້ຮັບຈາກໂຄງການລົງທຶນຂອງລັດ, ການສ້າງຂໍ້ກຳນົດລະຫວ່າງເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາ ແລະ ສືບຕໍ່ປັບປຸງວິທີການ ແລະ ຂັ້ນຕອນຕ່າງໆ. ຊຶ່ງອາດຕ້ອງໄດ້ໃຊ້ເວລາຕື່ມອີກປະມານ 2-3 ປີ ເຄື່ອງມືການຄຸ້ມຄອງການລົງທຶນລັດ (ກົດໝາຍ, ຄູ່ມື ແລະ ດຳລັດການຈັດຕັ້ງປະຕິບັດ) ຈະຖືກເຜີຍແຜ່ ແລະ ນຳໃຊ້ຢ່າງແທ້ຈິງໃນທົ່ວປະເທດ. ແນວໃດກໍ່ຕາມ ດ້ວຍຄວາມເອົາໃຈໃສ່ຢ່າງຫ້າວຫັນຂອງກະຊວງ ຜທ ແລະ ບັນດາອົງການຕ່າງໆທີ່ຂຶ້ນກັບ, ການສະໜັບສະໜູນຢ່າງຈິງຈັງຈາກພີແສັບ ແລະ ຄວາມມີວິໃນ ແລະ ຫ້າວຫັນຂອງບັນດາເຈົ້າຂອງໂຄງການທັງຫລາຍ, ຂ້າພະເຈົ້າເຊື່ອວ່າການຄຸ້ມຄອງການລົງທຶນລັດຈະໄດ້ຮັບການປັບປຸງໃຫ້ດີຂຶ້ນຢ່າງແນ່ນອນ ແລະ ຈະເປັນການປະກອບສ່ວນຢ່າງໃຫຍ່ຫລວງຕໍ່ການພັດທະນາເສດຖະກິດ ແລະ ສັງຄົມໃນ ສປປ ລາວ.

# ການຝຶກອົບຮົມໃຫ້ຄູຝຶກ (TOT) ຄັ້ງສຸດທ້າຍຂອງ PCAP2

ການຝຶກອົບຮົມໃຫ້ຄູຝຶກ (TOT) ຂອງກະຊວງແຜນການແລະການລົງທຶນທີ່ໄດ້ລໍຄອຍກັນມາດົນນານນັ້ນ ໃນທີ່ສຸດກໍ່ໄດ້ເລີ່ມຕົ້ນຂຶ້ນໃນເດືອນສິງຫາ ປີ 2010. ຈຸດປະສົງການຝຶກອົບຮົມໃນຄັ້ງນີ້ກໍ່ເພື່ອຈັດຊຸດຝຶກອົບຮົມໃຫ້ແກ່ບັນດາຄູຝຶກກ່ຽວກັບການຄຸ້ມຄອງການລົງທຶນຂອງລັດ ຊຶ່ງຈະໄດ້ໄຂຂຶ້ນລະຫວ່າງເດືອນ ພະຈິກ ປີ 2010 ເຖິງເດືອນ ມີນາ ປີ 2011. ສຳຫລັບການຝຶກອົບຮົມໃນສົກປີໜ້ານັ້ນ ນອກຈາກຈະເປັນການຝຶກອົບຮົມທົ່ວໄປຄັ້ງສຸດທ້າຍຂອງ PCAP2 ແລ້ວ ການເຮັດ TOT ໃນຄັ້ງນີ້ກໍ່ຈະເປັນເທື່ອສຸດທ້າຍຂອງ PCAP2 ເຊັ່ນດຽວກັນ. ອີງຕາມຄຳສະເໜີ ຈາກກົມປະເມີນຜົນ, ກົມແຜນການ, ກົມພົວພັນການຕ່າງປະເທດ, ແລະ PCAP2 ງົບປະມານປະຈຳປີນີ້ໄປຈົນເຖິງງົບປະມານປະຈຳປີໜ້ານັ້ນຈະຖືກໃຊ້ເຂົ້າໃນການຝຶກອົບຮົມຄູຝຶກທີ່ມາຈາກ 4 ພາກສ່ວນຂອງລັດໃຫ້ໄດ້ເຂົ້າມາຮ່ວມກິດຈະກຳຂອງ PCAP2 ລວມມີທັງໝົດ25ຄົນ .

ໂຄງການTOTນີ້ຈະຈັດຂຶ້ນເປັນເວລາ 10 ມື້ (30 ຊົ່ວໂມງ) ໂດຍລວມມີ 9 ໝວດ ແລະອອກແບບຂຶ້ນເພື່ອໃຫ້ຜູ້ຄູຝຶກໄດ້ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບວິທີການກວດສອບ ແລະ ບໍລິຫານການລົງທຶນຂອງລັດ ພ້ອມກັນນັ້ນກໍ່ເພື່ອຝຶກທັກສະທີ່ຈຳເປັນໃຫ້ແກ່ຄູຝຶກ.

9 ຫົວບົດຂອງການຝຶກອົບຮົມປະກອບມີ

1. ກົດໝາຍວ່າດ້ວຍການລົງທຶນລັດ
2. ຂັ້ນຕອນການສະເໜີຂໍງົບປະມານປະຈຳປີ
3. ການຄຸ້ມຄອງທາງດ້ານການເງິນ
4. ບົດສະເໜີໂຄງການ
5. ການຄຸ້ມຄອງທຶນສົມທົບ ODA
6. ຂັ້ນຕອນການປະເມີນໂຄງການ
7. ການປະເມີນຜົນຂອງການປະເມີນ
8. ການປະເມີນແບບປຽບທຽບກັບເຄື່ອຈຸດປະສົງແຜນງານ "Program Objective Tree " (POT)
9. ການຄຸ້ມຄອງການລົງທຶນລັດຂັ້ນເມືອງ

● ທັດສະທີ່ຈຳເປັນ ສຳຫຼັບຄູຝຶກ

① ທັກສະໃນການນຳສະເໜີບົດ

② ທັກສະໃນການສິດສອນ

③ ທັກສະໃນການອຳນວຍຄວາມສະດວກ

TOT ນີ້ຈະຖືກປະຕິບັດໂດຍແບ່ງອອກເປັນສອງພາກສ່ວນໃຫຍ່. ພາກສ່ວນທີ່1ກໍ່ຄື ຄູຝຶກຫຼັກຂອງໂຄງການPCAP2ນັ້ນມີເປົ້າໝາຍເພື່ອເຮັດໃຫ້ຄູຝຶກທີ່ເຂົ້າຮ່ວມTOTທຸກຄົນໄດ້ເຂົ້າໃຈຢ່າງເລິກເຊິ່ງ ໂດຍຜ່ານຮູບແບບການຝຶກອົບຮົມ ນຳສະເໜີໃນແຕ່ລະສ່ວນ ແລະ ມີການອະທິບາຍເນື້ອຫາຕ່າງໆຢ່າງລະອຽດ.

ພາກສ່ວນທີ່ສອງກໍ່ຄື ຄູຝຶກທີ່ເຂົ້າອົບຮົມTOTຈະໄດ້ທຳການຝຶກອົບຮົມຕົນເອງ.ຈຸດປະສົງຫຼັກຂອງການຝຶກອົບຮົມຕົນເອງນີ້ແມ່ນເພື່ອສ້າງ 3 ທັດສະໃຫ້ແກ່ຄູຝຶກທີ່ເຂົ້າຮ່ວມTOTທັງໝົດ ເພື່ອໃຫ້ເຂົາເຈົ້າມີຄວາມເຂົ້າໃຈທີ່ຖືກຕ້ອງໃນສິ່ງທີ່ເຂົາເຈົ້າຮຽນມາໂດຍຜ່ານການໃຊ້ທັດສະໃນການນຳສະເໜີຂໍ້ມູນ, ເພື່ອເພີ່ມຄວາມສົນໃຈໃຫ້ແກ່ຄູຝຶກໂດຍຜ່ານການໃຊ້ທັດສະໃນການສິດສອນແລະເພື່ອເຮັດໃຫ້ຄູຝຶກມີຄວາມຮັບຮູ້ແລະສາມາດດຳເນີນການຮຽນແລະແລກປ່ຽນຄວາມຄິດເຫັນໄດ້ຢ່າງມີປະສິດທິຜົນ ໂດຍຜ່ານການໃຊ້ທັດສະໃນການອຳນວຍຄວາມສະດວກ.

ໃນຊ່ວງສຸດທ້າຍຂອງໂຄງການ TOT, ຈະມີການຄັດເລືອກຄູຝຶກດີເດັ່ນທີ່ສຸດ (Best Trainer). ແມ່ນໃຜນໍຈະໄດ້ຮັບລາງວັນນີ້ ຕ້ອງຕິດຕາມກັນຕໍ່ໄປ (ໂດຍ ທ່ານ ນາງ ອີຊິ ກາກິ)

# ທົບທວນຄືນກິດຈະກຳ ປີທີ 3 ຂອງ PCAP2

**ພວກເຮົາມາທົບທວນຄືນກິດຈະກຳຫຼັກໆ ແລະ ເຫດການຕ່າງໆທີ່ເກີດຂຶ້ນຕັ້ງແຕ່ເດືອນຕຸລາ ປີ 2009 ເຖິງເດືອນສິງຫາ ປີ 2010**

| ເດືອນ / ປີ | ກິດຈະກຳຫຼັກໆ |
|---|---|
| ຕຸລາ 2009 | ເລີ່ມຕົ້ນກິດຈະກຳປີທີ່ 3 |
| ພະຈິກ 2009 | ກອງປະຊຸມຮັບຮອງເອົາໂຄງການການລົງທຶນລັດ ເລີ່ມຕົ້ນການຝຶກອົບຮົມການຄຸ້ມຄອງການລົງທຶນລັດ |
| ທັນວາ 2009 | ເປີດງານແຂ່ງຂັນກິລາຊີເກມ, ອອກແຈ້ງການກ່ຽວກັບPIP. ສືບຕໍ່ການຝຶກອົບຮົມການຄຸ້ມຄອງການລົງທຶນລັດ |
| ເມັງກອນ 2010 | ສືບຕໍ່ການຝຶກອົບຮົມການຄຸ້ມຄອງການລົງທຶນລັດ. ຈັດຕັ້ງການຝຶກອົບຮົມການຄຸ້ມຄອງທາງດ້ານການເງິນ |
| ກຸມພາ 2010 | ຈັດຕັ້ງການຝຶກອົບຮົມໃຫ້ກະຊວງຕ່າງໆ ກ່ຽວກັບການຄຸ້ມຄອງການລົງທຶນລັດ |
| ມີນາ 2010 | ຈັດຕັ້ງການຝຶກອົບຮົມ OJT, ໄດ້ຈັດກອງປະຊຸມ JCC ຄັ້ງທີ່ 4 ຂຶ້ນ. ທ່ານຈູມມະລີ ປະທານປະເທດ ສປປ ລາວ ຢ້ຽມຢາມປະເທດຍີ່ປຸ່ນ |
| ເມສາ 2010 | ປະເພນີບຸນປີໃໝ່ລາວ |
| ພຶດສະພາ 2010 | ດຳເນີນການປັບປຸງປຶ້ມຄູ່ມື/ເອກະສານແຈກຢາຍ |
| ມິຖຸນາ 2010 | ດຳເນີນການປັບປຸງປຶ້ມຄູ່ມື/ເອກະສານແຈກຢາຍ ປ່ຽນແປງການຄຸ້ມຄອງໂຄງການຂອງກະຊວງແຜນການ ແລະ ການລົງທຶນ |
| ເດືອນກໍລະກົດ 2010 | ກະກຽມການປະເມີນຜົນຂອງການປະເມີນ ແລະ ກະກຽມການຝຶກອົບຮົມໃຫ້ຄູຝຶກ (TOT) |
| ເດືອນສິງຫາ 2010 | ຈັດຕັ້ງການຝຶກອົບຮົມໃຫ້ຄູຝຶກ (TOT) ໃຫ້ແກ່ພະນັກງານກະຊວງ ຜທ. ຈັດຕັ້ງກອງປະຊຸມ JCC ຄັ້ງທີ່5. ສິ້ນສຸດກິດຈະກຳປີທີ່3 |









25th SEA GAMES, LAOS
VIENTIANE 2009




ກິດຈະກຳຂອງPCAP2 ປີທີ່3ໄດ້ສິ້ນສຸດລົງ. ໃນສົກປີນີ້ຜົນໄດ້ຮັບຕົ້ນຕໍຈາກກິດຈະກຳກໍ່ຄື ການຈັດໃຫ້ມີການຝຶກອົບຮົມກ່ຽວກັບ PIP ທົ່ວປະເທດ ຄັ້ງທີ່ 2 ຂຶ້ນ. ພະນັກງານທີ່ເປັນຄູຝຶກ 14 ຄົນໄດ້ລົງໄປເຮັດວຽກຢູ່ທົ່ວປະເທດ ແລະໄດ້ທຳການຝຶກອົບຮົມພະນັກງານລັດແລະອົງການຂອງລັດ ກ່ຽວກັບການຄຸ້ມຄອງຢູ່ຕາມແຂວງຕ່າງໆ ທັງໝົດ 862 ຄົນ. ນອກຈາກນັ້ນ ຍັງໄດ້ຈັດການຝຶກອົບຮົມກ່ຽວກັບການຄຸ້ມຄອງທາງດ້ານການເງິນ ໃຫ້ກັບຜູ້ເຂົ້າຮ່ວມຈາກທົ່ວປະເທດອີກ 81 ຄົນ . ວຽກງານສຳຄັນອີກອັນໜຶ່ງທີ່ພີແຄັບ 2 ໄດ້ຊ່ວຍແມ່ນການຍື່ນສະເໜີກົດໝາຍວ່າດ້ວຍການລົງທຶນຂອງລັດຕໍ່ສະພາແຫ່ງຊາດຈົນໄດ້ຖືກຮັບຮອງ ແລະລັດຖະບັນຍັດຂອງປະທານປະເທດກ່ຽວກັບການປະກາດໃຊ້ກົດໝາຍດັ່ງກ່າວກໍ່ໄດ້ປະກາດອອກ. ປະຈຸບັນ ກະຊວງ ຜທ ກຳລັງຮ່າງດຳລັດການຈັດຕັ້ງປະຕິບັດກົດໝາຍ, ເຊິ່ງພີແຄັບ 2 ກໍ່ຈະສືບຕໍ່ໃຫ້ການສະໜັບສະໜູນຕໍ່ໄປ. ສຳຫລັບໂຄງການຂອງ JICA ແມ່ນໄດ້ມີການປະເມີນຜົນໄລຍະກາງຂອງໂຄງການ. ໃນຊ່ວງກິດຈະກຳ 4 ປີເມື່ອເຄິ່ງໜຶ່ງຂອງໂຄງການໄດ້ສິ້ນສຸດລົງໄປແລ້ວ ສຳນັກງານໃຫຍ່ຂອງ JICA ໄດ້ຈັດສົ່ງໜ່ວຍງານລົງໄປກວດກາເພື່ອປະເມີນຜົນໂຄງການ. ຜ່ານມາກິດຈະກຳຂອງພວກເຮົາແມ່ນໄດ້ຮັບການຕີລາຄາສູງ ແລະ ສ່ວນທີ່ຍັງເຫຼືອຂອງໂຄງການ ພວກເຮົາມີແຜນທີ່ຈະສືບຕໍ່ເຮັດໃຫ້ໄດ້ຮັບຜົນດີຕະຫຼອດໄປ. ອີກດ້ານໜຶ່ງແມ່ນມີການຊັບຊ້ອນໜ້າທີ່ໃໝ່ລະຫວ່າງ ທ່ານ ບຸນປອນ ສີສຸລາດ ແລະ ທ່ານ ວິໄຊ ຊາວັນນາ (ຜູ້ເກົ່າ) ທ່ານ ບຸນປອນ ໄດ້ມາເຮັດໜ້າທີ່ເປັນຜູ້ບໍລິຫານໂຄງການແທນ ທ່ານ ວິໄຊ .ສ່ວນຄະນະກຳມະການໃໝ່ນັ້ນ PCAP2 ໄດ້ເລີ່ມຕົ້ນການເຮັດວຽກໄດ້ດີຕະຫຼອດມາ. ໃນຊ່ວງ 1 ປີທີ່ຜ່ານມາເຫດການໃຫຍ່ໆທີ່ເກີດຂຶ້ນໃນປະເທດລາວຄົງຈະໜີບໍ່ພົ້ນງານມະຫະກຳກິລາຊີເກມ.ງານມະຫະກຳຊີເກມຖືເປັນງານໂອລິມປິກຂອງປະ ເທດໃນບັນດາພາກພື້ນກຸ່ມອາຊຽນຊຶ່ງເທື່ອນີ້ເປັນເທື່ອທີ່ 25 ແລະມີການຈັດຂຶ້ນຕັ້ງແຕ່ວັນທີ່ 9 ເຖິງ 18 ເດືອນ ທັນວາ ທີ່ນະຄອນຫຼວງວຽງຈັນ ປະເທດລາວ. ຈຳນວນຫຼຽນທັງໝົດທີ່ນັກກິລາຈາກປະເທດລາວຍາດມາໄດ້ ແມ່ນຢູ່ໃນອັນດັບ 7 ຈາກທັງໝົດ 11 ປະເທດ, ໂດຍສະເພາະແລ້ວລາວໄດ້ຫຼຽນຄຳທັງໝົດ 33 ຫຼຽນເທົ່າກັບຈຳນວນຫຼຽນຄຳທີ່ໄດ້ຈາກປະເທດສິງກະໂປ. ນອກຈາກປະເທດລາວທີ່ເປັນປະເທດເຈົ້າພາບຈະໄດ້ຮັບລະບົບສາທາລະນູປະໂພກຕ່າງໆຈາກງານກິລາຄັ້ງນີ້ແລ້ວຄົນລາວຍັງໄດ້ຮຽນຮູ້ກ່ຽວກັບຄວາມມີນ້ຳໃຈຮັບຜິດຊອບຄວາມເປັນນ້ຳໜຶ່ງໃຈດຽວກັນລະຫວ່າງຄົນລາວດ້ວຍກັນເອງກັບຄົນຕ່າງປະເທດ ຊຶ່ງສະແດງອອກໃຫ້ເຫັນແຈ້ງໃນຊ່ວງງານມະຫະກຳກິລາດັ່ງກ່າວ. PCAP2 ຈະໄດ້ກ້າວເຂົ້າສູ່ປີສຸດທ້າຍຂອງໂຄງການປີທີ 4. ຕັ້ງແຕ່ຊ່ວງໄລຍະເວລາເດືອນຕຸລາ ປີ 2010 ໄປເຖິງເດືອນພະຈິກ ປີ 2011, ຂ້ອຍຫວັງວ່າຈະໄດ້ພົບກັນກັບບັນດາທ່ານອີກ ຢູ່ທີ່ສູນການຝຶກອົບຮົມໃນທົ່ວປະເທດ, ການຝຶກອົບຮົມ OJT, ການປະເມີນຜົນຄັ້ງສຸດທ້າຍຂອງ JICA ແລະຈາກກິດຈະກຳອື່ນໆອີກ. (ໂດຍ ອິຊິກາກິ)

# ການແນະນຳຕົວຂອງຜູ້ປະສານງານໂຄງການ

## ນ. ບຸນມີ ສີຈັນລາ ( ຜູ້ປະສານງານໂຄງການ ພີແຄັບ 2 )



ສະບາຍດີ ອ້າຍ ເອື້ອຍ ນ້ອງ ພ້ອມດ້ວຍຫມູ່ເພື່ອນທີ່ເຮັດວຽກແຜນການ ແລະ ຄຸ້ມຄອງການລົງທຶນຂອງລັດ ແຕ່ເຫນືອຮອດໄຕ້ທູກໆຄົນ. ຂ້າພະເຈົ້າ ນ. ບຸນມີ ສີຈັນລາ(ຊື່ຫລິ້ນ ອຶ້ງ) ສັງກັດຢູ່ພະແນກບໍລິຫານ ແລະສັງລວມ ກົມປະເມີນຜົນ ກະຊວງແຜນການ ແລະການລົງທຶນ. ຫາກໍ່ຖືກແຕ່ງຕັ້ງໃຫ້ຮັບຜິດຊອບເປັນຜູ້ປະ ສານງານ ໂຄງການ PCAP2 ໃຫມ່ໆມາດໆນີ້ເອງ ດັ່ງນັ້ນບັນດາທ່ານອາດຈະບໍ່ຄ່ງຄຸ້ນຫນ້າເຄີຍຕາກັບຂ້າ ພະເຈົ້າ ປານໃດລວມທັງຂ້າພະເຈົ້າເອງກໍ່ເຊັ່ນກັນ. ແຕ່ກໍ່ເປັນຜູ້ຢູ່ເບື້ອງຫລັງໃນການປະກອບສ່ວນວຽກງານດັ່ງກ່າວ ແລະ ເຝົ້າມອງຜົນສຳເລັດໃນວຽກງານຂອງພວກທ່ານ ກໍ່ຄືການນຳເອົາຄູ່ມືຂອງ PCAP2 ໄປນຳໃຊ້ໃນຕົວຈິງໃຫ້ເກີດ ດອກອອກຜົນຕະຫລອດມາ, ຫວັງວ່າອີກບໍ່ດົນກໍ່ຄົງຈະມີໂອກາດພົບຫນ້າພໍ້ຕາກັນແນ່ ນອນເພາະປະຈຸບັນແມ່ນ ກຳລັງທຸ້ມເທສຸດຕົວສຸດໃຈໃຫ້ກັບລູກສາວໂຕນ້ຽໆທີ່ສຸດຫນ້າຮັກຫນ້າຊັງສຸດໆຢູ່.

ມີຄົນຖາມວ່າງານອະດິເລກ ອຶ້ງມັກເຮັດຫຍັງ?, ອາ! ອາ ! ເວົ້າຄວາມຈິງສະເນາະ"ເດີນແບບ, ສອນເຕັ້ນລຳ, ຟ້ອນ ສິນລະປະແລະ... "(ບໍ່ໄດ້ເວົ້າຫລິ້ນໄດນີ້ເພາະກິນຄາຍມາລາຍງານແລ້ວ)ເອົາລະເນະພໍຫອມປາກຫອມຄໍໂອກາດ ຫນ້າຟ້າໃຫມ່ພົບກັນໃຫມ່. ການປະຕິບັດວຽກງານໃນໄລຍະຜ່ານມາ ຖ້າມີຫຍັງຂາດຕົກບົດຜ່ອງກໍ່ຂໍອະໄຫສິເດີ.

## ທ. ບົວແກ້ວ ສີພອນໄຊ ( ຜູ້ປະສານງານໂຄງການ ພີແຄັບ 2 )

ຂ້າພະເຈົ້າ ທ. ບົວແກ້ວ ສີພອນໄຊ ຊື່ນ້ອຍ (ໂລ້) ສັງກັດຢູ່ ພະແນກ ປະເມີນຜົນຂົງເຂດ ເສດຖະກິດ. ກົມປະເມີນຜົນ ທັງເຮັດວຽກເປັນຜູ້ປະສານງານບໍລິຫານຂອງພີແຄັບ (PCAP2) ຝ່າຍລາວ. ຂ້າພະເຈົ້າ ຮູ້ສຶກວ່າມີຄວາມທ້າທາຍຫຼາຍໃນການເຮັດວຽກ 2 ຢ່າງໄປພ້ອມໆກັນ. ຄ່ຽງຄູ່ກັນນັ້ນກໍ່ໄດ້ຮຽນຮູ້ບົດຮຽນໄດ້ ຫຼາຍໆຢ່າງເຊັ່ນດຽວກັນ. ມີຄວາມພູມໃຈທີ່ໄດ້ຮຽນຮູ້ ແລະ ຮັບໃຊ້ບັນດາໝູ່ສະຫາຍ ແລະ ພະນັກງານຈາກ ຂະແໜງການຕ່າງໆໃນທົ່ວປະເທດໃນໄລຍະຜ່ານມາ ຖ້າສິ່ງໃດຂາດຕົກບົກຜ່ອງໄປກໍ່ຂໍໂທດຂໍອະໄພຫຼາຍໆ. ຄຳວ່າຕຳນິຕິຊົມຂ້າພະເຈົ້າຖືວ່າເປັນຢາວິເສດ ແລະ ຈະເຮັດໃຫ້ວຽກສະດວກກໍ່ຄືການບໍລິຫານ ໃຫ້ແກ່ທ່ານ ດີຂື້ນ. (ໃນເວລາຫວ່າງຂອງຂ້າພະເຈົ້າແມ່ນມັກເຕະບານ )ຂໍຂອບໃຈຫຼາຍໆ ຂໍຝາກເນື້ອຝາກຕົວແດ່ເດີ.



# ປະຕິທິນໂຄງການ

### ສະຫຼຸບກິດຈະກຳຕັ້ງແຕ່ ເດືອນ 7 - ເດືອນ 8 ປີ 2010

- ເດືອນ 7 : ປັບປຸງປື້ມຄູ່ມືຄືນໃໝ່, ປັງປຸງອຸປະກອນການຝຶກອົບຮົມຄືນໃໝ່
- ເດືອນ 8 : ກະຊວງ ຜທ ເລີ້ມຕົ້ນດຳເນີນການເຮັດ TOT, ເປີດກອງປະຊຸມ JCC ຄັ້ງທີ 5, ສິ້ນສຸດກິດຈະກຳປີທີ່3

### ແຜນກິດຈະກຳ ແຕ່ເດືອນຕຸລາ 2010 ເຖິງເດືອນທັນວາ

- ເດືອນ 10 : ເລີ້ມຕົ້ນກິດຈະກຳປີທີ່4. ການຕຽມການຝຶກອົບຮົມ
- ເດືອນ 11 : ການຝຶກອົບຮົມໃຫ້ແກ່ພະແນກ ຜທ ຂັ້ນເມືອງໃຫ້ຫົວໜ້າ ຫ້ອງການຕ່າງໆ. ການຝຶກອົບຮົບ ໃຫ້ພະນັກງານຕ່າງຂອງພະແນກ ຜທ
- ເດືອນ 12 : ການຝຶກອົບຮົມ PIP ຢູ່ 17 ແຂວງ

### ● ບົດບັນທຶກຈາກບັນນາທິການ ●

ກັບມາແລ້ວ ພາຍຫຼັງຫ່າງຫາຍຈາກປະເທດລາວໄປ 4 ເດືອນ ຕອນນີ້ຂ້ອຍກຳລັງປັບໂຕເຂົ້າສູ່ວຽກອີກເທື່ອໜຶ່ງ. ຢູ່ທີ່ວຽງຈັນ ມີຝົນຕົກທຸກມື້ ອາກາດ ຮູ້ສຶກວ່າເຢັນກ່ວາຢູ່ຍີ່ປຸ່ນຊ້ຳອີກ. ຕຶກ MPIໃໝ່ທີ່ກຳລັງກໍ່ສ້າງຢູ່ນັ້ນກໍ່ສູງຂຶ້ນຫຼາຍແລ້ວ ໃນຕົວ ເມືອງກໍ່ມີຮ້ານໃໝ່ຫຼາຍໆຮ້ານເກີດຂຶ້ນ ແຕ່ລະມື້ຄົ້ນພົບສິ່ງໃໝ່ໆ ເຫຼົ່ານີ້ແລ້ວ ຊີວິດຂອງຂ້ອຍກໍ່ມ່ວນຊື່ນຂຶ້ນຕື່ມອີກ. ທ້າຍເດືອນສິງຫານີ້ ໂຄງການ PCAP2 ປີທີ3ປີກໍ່ຈະສິ້ນສຸດລົງ. ຈົ່ງກ່ວາຈະເລີ້ມຕົ້ນກ້າວເຂົ້າສູ່ປີທີ່ 4 ໃນ ເດືອນຕຸລານີ້ ຂໍໃຫ້ທຸກໆຄົນຈົ່ງຮັກສາສຸກຂະພາບກັນເດີ້ (ອີຊິກາກິ)

ກ່ຽວກັບໂຄງການນີ້ ພວກເຮົາຍິນດີຮັບເອົາທຸກຄວາມຄິດເຫັນ ແລະຄຳຕຳໜິຊົມຕ່າງໆຈາກທ່ານ

**ຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່:**


- ຫ້ອງການຂອງໂຄງການ : ກະຊວງແຜນການ ແລະ ການລົງທຶນ, ຖະໜົນ: ສຸພານຸວົງ, ນະຄອນຫລວງວຽງຈັນ
- ທີ່ຢູ່ໄປສະນີ : C/O JICA Laos Office, P.O.Box 3933, Souphanuvong Avenue, Vientiane
- ໂທລະສັບ ແຟັກ : +856(0)21.243.687
- ອີເມລ : jica.pcap2@gmail.com
- ເວັບໄຊທ໌ : http://www.jica.go.jp/project/laos/0700667/laos/index.html